ສາທາລະນະລັດປະຊາທິປະໄຕປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ

ເລກທີ 631/ຫຄຊກລ.ຄພ
ນະຄອນຫຼວງວຽງຈັນ, ວັນທີ 07 ສິງຫາ 2023

# ບົດລາຍງານຜົນຂອງການລົງຕິດຕາມ ກວດກາການເຄື່ອນໄຫວ ວຽກງານການຂອງໂຄງການເກັບກູ້ລະເບີດແຫ່ງຊາດ ປະຈຳແຂວງ ອັດຕະປື (ຄກລ).

I. ພາກສະເໜີ.

ປະຕິບັດຕາມຂໍ້ຕົກລົງຂອງຫົວໜ້າຫ້ອງການ, ສະບັບເລກທີ 584/ຄຊກລ.ຫກ.ບຫ ລົງວັນ 20/07/2023 ໃນວັນທີ 22 ຫາ 30 ກໍລະກົດ 2023, ທີມງານກວດກາຄຸ້ມຄອງຄຸນນະພາບ, ຫ້ອງການ ຄຊກລ ໄດ້ສົມທົບກັບ ຄ ຄກລຂ ແລະ ຄກລ ແຂວງ ອັດຕະປື, ໄດ້ດຳເນີນການເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານການເກັບກູ້ ແລະ ທຳລາຍລະເບີດຢູ່ ແຂວງ ອັດຕະປື.

ຄະນະທີມງານມີລາຍຊື່ດັ່ງລຸ່ມນີ້:

1. ທ່ານ ບຸນຮຽງ ສຸກຈັນທະລາວົງ ວິຊາການໜ່ວຍງານກວດກາຄຸນນະພາບຫ້ອງການ ຄຊກລ.
2. ທ່ານ ພອງສອນ ໄຊສົມບັດ ວິຊາການໜ່ວຍງານກວດກາຄຸນນະພາບຫ້ອງການ ຄຊກລ.
3. ທ່ານ ພູວົງ ສີສະໜັກ ພະນັກງານວິຊາການ/ຂັບລົດຫ້ອງການ ຄຊກລ.
4. ທ່ານ ສອນໄຊ ພົມມະທຳ ແພດ/ວິຊາການ ປະຈຳໜ່ວຍງານກວດກາຫ້ອງການ ຄຊກລ.
5. ທ່ານ ແສງສຸລີ ວຽງຄຳສອນ ວິຊາການໜ່ວຍງານກວດກາຄຸນນະພາບຫ້ອງການ ຄຊກລ.
6. ທ່ານ ກິດວົງໄຊ ພຸດທະວົງ ວິຊາການຫ້ອງການ ຄຄກລຂ ອັດຕະປື.
7. ທ່ານ ກ້ອຍ ຈັນວິໄລວັນ ວິຊາການຫ້ອງການ ຄຄກລຂ ອັດຕະປື.

ພາກສ່ວນ ຄກລ ແຂວງ ອັດຕະປື

1. ທ່ານ ພູວົງ ແກ້ວມະນີ ວິຊາການທຳລາຍລະເບີດຂັ້ນສູງ (SEOD) ຄກລ ແຂວງ ອັດຕະປື.
2. ທ່ານ ສົມພອນ ຊາພູວົງ ຜູ້ຊ່ວຍວຽກ (SEOD) ປະຈຳ ຄກລ ແຂວງ ອັດຕະປື.
3. ທ່ານ ນ. ວຽງແກ້ວ ບໍ່ສີປະເສີດ ຫົວໜ້າແພດປະຈຳ ຄກລ ແຂວງ ອັດຕະປື.

II. ຈຸດປະສົງ.

ເພື່ອຕິດຕາມ ກວດກາການປະຕິບັດງານ ແມ່ນເນັ້ນໃສ່ກວດກາດ້ານວິຊາການເກັບກູ້ ລບຕ ຂອງນັກວິຊາການ, ການບໍລິຫານຄຸ້ມຄອງບັນຊາ ພ້ອມກັນນັ້ນກໍ່ເປັນການສັງເກດທາງດ້ານເຕັກນິກການປະຕິບັດເກັບກູ້, ທຳລາຍ ລບຕ ໃຫ້ມີປະສິດທິພາບ, ມີຄວາມປອດໄພ ແລະ ເພື່ອຊຸກຍູ້ ປັບປຸງການປະຕິບັດງານ ຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນ ແລະ ຄວບຄຸມໃຫ້ເຂົ້າສູ່ລະບົບເປັນເອກະພາບກັນໃນມາດຕະຖານອັນດຽວກັນ.

III. ການເຄື່ອນໄຫວ ຂອງຄະນະກວດກາພາກສ່ວນຫ້ອງການ.

ໂຄງການເກັບກູ້ລະເບີດແຫ່ງຊາດປະຈຳແຂວງ ອັດຕະປື ມີພະນັກງານທັງໝົດ 156 ຄົນ, ປະຈຳຫ້ອງການ 25 ຄົນ, ຍິງ 07 ຄົນ, ວິຊາການທຳລາຍລະເບີດຂັ້ນສູງຈຳນວນ 01 ທ່ານ, ພາກສະໜາມມີພະນັກງານ 131 ຄົນ, ຍິງ 39

ຄົນ, ປະກອບມີທີມງານທັງໝົດ 14 ທີມງານຄື : ທີມງານໂຄສະນາສຶກສາຄວາມສ່ຽງ 01 ທີມ (RE), ທີມງານສຳຫຼວດທີ່ບໍ່ແມ່ນດ້ານວິຊາການ 01 ທີມ (NTS), ທີມງານສຳຫຼວດເຕັກນິກດ້ານວິຊາການ 01 ທີມ (TS), ແລະ ທີມງານກວດກູ້ (CL), ຈຳນວນ 11 ທີມ,

IV. ບັນດາໜ້າວຽກທີ່ ຄກລ ປະຈຳແຂວງ ອັດຕະປື ຈັດຕັ້ງປະຕິບັດໄດ້ແຕ່ເດືອນ 01 ຫາ ເດືອນ 06 /2023 ຄື :

- ວຽກງານໂຄສະນາສຶກສາຄວາມສ່ຽງ (RE) ແມ່ນເຮັດວຽກໂຄສະນາກ່ຽວກັບຄວາມສ່ຽງຕາມໝູ່ບ້ານ ອີງໃສ່ຕາມແຜນການຂອງປີໂຄງການເກັບກູ້ລະເບີດແຫ່ງຊາດ ປະຈຳແຂວງ ອັດຕະປື ແມ່ນຈຳນວນ 50 ໝູ່ບ້ານສາມາດຈັດຕັ້ງປະຕິບັດໂຄສະນາໄດ້ 10 ໝູ່ບ້ານ ຈຳນວນຜູ້ໃຫຍ່ 5,374 ຄົນ, ຈຳນວນເດັກນ້ອຍ 6,899 ຄົນ, ລວມມີຜູ້ເຂົ້າຮ່ວມຮັບຟັງ 12,273 ຄົນ, ຄິດໄລ່ເປັນເປີເຊັນເທົ່າກັບ 20%.
- ວຽກງານສຳຫຼວດບໍ່ແມ່ນວິຊາການ (NTS) ຕາມແຜນປີຈຳນວນ 07 ໝູ່ບ້ານ ສາມາດຈັດຕັ້ງປະຕິບັດໄດ້ 05 ໝູ່ບ້ານ ປະຊາຊົນລາຍງານຈຸດຫຼັກຖານຄື : ບົມໃຫຍ່ 01 ໜ່ວຍ, ປະເພດບົມບີ້, ຈຳນວນ 66 ໜ່ວຍ, ມີນ, ຈຳນວນ 0 ໜ່ວຍ, ສຳພາວຸດ 04 ລູກ, ມີຜູ້ເຂົ້າຮ່ວມຮັບຟັງ, ຜູ້ໃຫຍ່ 1,247 ຄົນ ແລະ ເດັກນ້ອຍ 739 ຄົນ.
- ວຽກງານສຳຫຼວດທາງດ້ານເຕັກນິກ (TS) ມີ 01 ທີມງານ ຕາມແຜນປີ 2023, ສຳຫຼວດໃຫ້ໄດ້ 3,500,000 ຕາແມັດ, ແມ່ນເຮັດການສຳຫຼວດກຳນົດຂອບເຂດອັນຕະລາຍທີ່ມີການຕົກຄ້າງຂອງ ລບຕ ເປົ້າໝາຍຂອງແຜນປີແມ່ນບໍ່ໄດ້ກຳນົດເປັນບ້ານ ໄດ້ກຳນົດເປັນພື້ນທີ່ອັນຕະລາຍໄດ້ 2,835,000 ຕາແມັດ, ພື້ນທີ່ກະສິກຳ 1,796,807 ຕາແມັດ, ສາມາດກວດພົບປະເພດບົມບີ້ໄດ້ 329 ໜ່ວຍ, ສຳພາວຸດອື່ນໆ 07 ລູກ, ລວມ ລບຕ ທັງໝົດ 336 ລູກ, ຄິດໄລ່ເປັນເປີເຊັນເທົ່າກັບ 79%.
- ວຽກງານກວດກູ້ເນື້ອທີ່ (AC) ແມ່ນໄດ້ກວດກູ້ຕາມ (CHA) ຂອງທີມງານສຳຫຼວດທາງດ້ານວິຊາການ (TS) ອີງຕາມແຜນປີ 2023 ຈຳນວນ 3,880,000 ຕາແມັດ, ກວດກູ້ເນື້ອທີ່ດິນກະສິກຳປະຕິບັດໄດ້ 1,606,172 ຕາແມັດ, ສາມາດກວດພົບລູກລະເບີດປະເພດຕ່າງໆດັ່ງນີ້ : ບົມໃຫຍ່ 0 ໜ່ວຍ, ບົມບີ້ 666 ໜ່ວຍ, ມີນຈຳນວນ 0 ໜ່ວຍ, ສຳພາວຸດອື່ນໆ 11 ລູກ, ຜູ້ໄດ້ຮັບຜົນປະໂຫຍດ, ຈານວນ 4,655 ຄົນ, ຄິດໄລ່ເປັນເປີເຊັນເທົ່າກັບ 41%.
- ວຽກງານທຳລາຍລະເບີດເຄື່ອນທີ່ (RT) ບໍ່ໄດ້ກຳນົດບ້ານຢູ່ແຜນປີ, ໄດ້ທຳລາຍລະເບີດ ຕາມການລາຍງານຂອງປະຊາຊົນ 26 ໝູ່ບ້ານ, ຈຳນວນ 46 ຄັ້ງ, ບົມໃຫຍ່ 0 ໜ່ວຍ, ປະເພດບົມບີ້ຈຳນວນ 517 ໜ່ວຍ, ສຳພາວຸດອື່ນໆ 09 ລູກ, ມີຜູ້ໄດ້ຮັບຜົນປະໂຫຍດ, ຍິງ 2,879 ຄົນ, ຊາຍ 2,863 ຄົນ, ລວມ 5,742 ຄົນ.

ລົງຕິດຕາມວຽກງານພາກສະໜາມ ຄກລ ປະຈຳແຂວງ ອັດຕະປື.

- ລົງສະໜາມທີ່ກຳລັງກວດກູ້ ບ້ານ ວົງສົມພູ ເມືອງ ພູວົງ ແຂວງ ອັດຕະປື ລະຫັດໜ້າວຽກ Task ID : UXO lao_CHA-2019_1705020_006, ວັນທີເລີ່ມຕົ້ນ 09/ 06 / 2023 ເນື້ອທີ່ທັງໝົດ 54,641 ມ², ເນື້ອທີ່ກວດໄດ້ແລ້ວ 40,327 ມ², ກວດພົບລະເບີດປະເພດບົມບີ້ ຈຳນວນ 11 ໜ່ວຍ (blu26x11) ສ່ວນເນື້ອທີ່ຍັງເຫຼືອຄາດວ່າຈະສຳເລັດໃນວັນທີ 08/08/2023, ນຳໃຊ້ເຄື່ອງກວດລະເບີດ Vallon VMXC10-3 ໃນຄວາມເລິກ 0.25 ແມັດ,ມີຜູ້ໄດ້ຮັບຜົນປະໂຫຍດທັງໝົດຈຳນວນ 03 ຄ/ຄ, ຈຳນວນພົນ 15 ຄົນ.
- ລົງຕິດຕາມກວດກາ ວຽກງານສຳຫຼວດທາງດ້ານວິຊາການ (TS) ບ້ານໃໝ່ນາກອກ ເມືອງ ຊານໄຊ ແຂວງ ອັດຕະປື, ເລີ່ມການສຳຫຼວດ ວັນທີ 21 ຫາ 25 ກໍລະກົດ 2023 ສຳຫຼວດພື້ນທີ່ໄດ້ 37,500 ຕາແມັດ, ກຳນົດເປັນບ້ອກແດງ 08 ບ້ອກ, ສີຂຽວ 04 ບ້ອກ, ສີຂາວ 03 ບ້ອກ, ສຳຫຼວດພົບລະເບີດລູກຫວ່ານ ປະເພດບົມບີ້ຊາວທົກ ຈຳນວນ 8 ໜ່ວຍ ( blu26x8) ມີຜູ້ຄົນໄດ້ຮັບຜົນປະໂຫຍດ ຈານວນ 03 ຄອບຄົວ, ຈານວນຄົນ 18 ຄົນ.

- ທາງທີມງານກວດກາຄຸນນະພາບໄດ້ສົມທົບກັບວິຊາການຂອງ ຄກລ ແຂວງ ອັດຕະປື ລົງເຄື່ອນໄຫວຄວບຄຸມຄຸນນະພາບຕາມພື້ນທີ່ໆມີການເກັບກູ້ຕາມບົດລາຍງານຜົນສຳເລັດແລ້ວ ຈຳນວນ 08 ສະໜາມຄື:
  - ➢ ບ້ານ ດອນສູງ, ເມືອງ ສະໜາມໄຊ, ແຂວງ ອັດຕະປື, ຈຳນວນ 02 ສະໜາມ, ລະຫັດໜ້າວຽກຄື:
    1. Task ID : UXO Lao -AC-2023-1703007-003_Area =37,618 $m^2$.
    2. Task ID : UXO Lao -AC-2023-1703007-004_Area =42,417 $m^2$.
  - ➢ ບ້ານ ຕາດກຸ່ມ ເມືອງ ຊານໄຊ ແຂວງ ອັດຕະປື, ຈຳນວນ 02 ສະໜາມ,ລະຫັດໜ້າວຽກຄື:
    1. Task ID : UXO Lao -AC-2023-1704060-001_Area =56,232 $m^2$
    2. Task ID : UXO Lao -AC-2023-1704060-002_Area =59,525 $m^2$
  - ➢ ບ້ານ ນ້ຳກົງ ເມືອງ ພູວົງ ແຂວງ ອັດຕະປື, ຈຳນວນ 02 ສະໜາມ,ລະຫັດໜ້າວຽກຄື:
    1. Task ID : UXO Lao -AC-2023-1705017-001_Area =53,551 $m^2$
    2. Task ID : UXO Lao -AC-2023-1705017-002_Area =52,424 $m^2$
  - ➢ ບ້ານ ພູໂຮມ, ເມືອງ ພູວົງ, ແຂວງ ອັດຕະປື, ຈຳນວນ 01 ສະໜາມ, ລະຫັດໜ້າວຽກຄື:
    1. Task ID : UXO Lao -AC-2023-1705023-005_Area =46,792 $m^2$
  - ➢ ບ້ານ ສະປວນ, ເມືອງ ໄຊເສດຖາ, ແຂວງ ອັດຕະປື, ຈຳນວນ 01 ສະໜາມ, ລະຫັດໜ້າວຽກຄື:
    1. Task ID : UXO Lao -AC-2023-1701023-004_Area =48,625 $m^2$

ຜ່ານການກວດກາຄວບຄຸມຄຸນນະພາບທັງ 08 ສະໜາມ, ມີເນື້ອທີ່ລວມ 397,184 ຕາແມັດ, ທີມງານກວດກາຄຸນນະພາບ ຫ້ອງການ ຄຊກລ ໄດ້ສ້າງເປັນບັອກເພື່ອຄວບຄຸມຄຸນນະພາບໄດ້ 21 ບັອກ, ລວມເນື້ອທີ່ຄວບຄຸມຄຸນນະພາບໄດ້ 12,692 ຕາແມັດ, ຄິດໄລ່ເປັນເປີເຊັນເທົ່າກັບ 3,19%, ແມ່ນມີຄວາມປອດໄພ, ບໍ່ພົບສິ່ນສ່ວນເສດເຫຼັກທີ່ໃຫຍ່ ກວ່າມາດຕະຖານແຫ່ງຊາດທີ່ກຳນົດໄວ້, ເກີນເຄິ່ງບົມບີ 26 (½ blu26).

V. ດ້ານດີພົ້ນໄດ້ຮັບ

- ການຈັດຕັ້ງປະຕິບັດວຽກງານເກັບກູ້ລະເບີດຢູ່ພາກສະໜາມແມ່ນມີຄວາມປອດໄພ.
- ຜູ້ບັນຊາສະໜາມ ແລະ ຜູ້ຊ່ວຍຫົວໜ້າທີມກໍ່ມີຄຸນວຸດທິ, ວິຊາການເກັບກູ້ກໍ່ລ້ວນແຕ່ໄດ້ຜ່ານການຝຶກອົບຮົມຈາກສູນຝຶກຂອງໂຄງການເກັບກູ້ລະເບີດແຫ່ງຊາດ.
- ການສ້າງຈຸດບໍລິຫານຄຸ້ມຄອງ, ຈຸດບັນຊາ, ສະຖານທີປະຕິບັດທາງດ້ານການແພດ, ບ່ອນເກັບມ້ຽນອຸປະກອນເຄື່ອງກວດລະເບີດ, ບ່ອນຈອດລົດ, ຂຸມຂີ້ເຫຍື່ອ, ວິດຖ່າຍ, ບ່ອນທ້ອນໂຮມເກັບມ້ຽນເຫຼັກເສດ, ສະຖານທີ່ເກັບມ້ຽນວັດຖຸລະເບີດ ແລະ ບ່ອນເກັບມ້ຽນລະເບີດທີ່ເຄື່ອນຍ້າຍໄດ້ ສິ່ງທີ່ກ່າວມານັ້ນເຫັນວ່າຖືກຕ້ອງຕາມມາດຕະຖານການປະຕິບັດງານຂອງໂຄງການ ແລະ ສອດຄ່ອງກັບມາດຕະຖານແຫ່ງຊາດທີ່ໄດ້ກຳນົດໄວ້.
- ການປະຕິບັດງານຂອງທີມງານເກັບກູ້ແມ່ນປະຕິບັດຕາມແຜນປະຈຳປີ, ພື້ນທີ່ເກັບກູ້ແມ່ນໄດ້ມາຈາກທີມງານສຳຫຼວດທາງດ້ານວິຊາການ, ບໍ່ແມ່ນວິຊາການ ການເຄື່ອນໄຫວວຽກງານເກັບກູ້ລະເບີດຂອງແຕ່ລະທີມງານເກັບກູ້ແມ່ນເຮັດໄປພ້ອມກັນກັບການທຳລາຍໃນກໍລະນີທີ່ກວດພົບລະເບີດທີ່ບໍ່ສາມາດເຄື່ອນຍ້າຍໄດ້ແມ່ນຈະໄດ້ເຮັດການທຳລາຍໃນມື້ນັ້ນເລີຍ.
- ພາຍຫຼັງສຳເລັດການເກັບກູ້ໃນບັອກໃດໜຶ່ງຫົວໜ້າທີມຈະໄດ້ກວດກາຄຸນນະພາບໃນບັອກດັ່ງກ່າວ 10%, ເມື່ອສຳເລັດສະໜາມທັງໝົດແມ່ນວິຊາການຂັ້ນ 4 ຈະລົງກວດກາຄຸນນະພາບ 2% ອີກເທື່ອໜຶ່ງຈຶ່ງສາມາດເຮັດໃບມອບຮັບເນື້ອທີ່ດິນໃຫ້ເຈົ້າຂອງໄປນຳໃຊ້ໄດ້ຕາມຈຸດປະສົງ.

VI. ສະຫຼຸບ ດ້ານອ່ອນທີ່ຈະຕ້ອງໄດ້ແກ້ໄຂ.

ຜ່ານການລົງກວດກາຄວບຄຸມຄຸນນະພາບຂອງໜ່ວຍກວດກາ, ຫ້ອງການ ຄຊກລ ສະຫຼຸບໄດ້ດັ່ງນີ້:

1. ແນະນຳ ແພດປະຈຳສະໜາມເອົາໃຈໃສ່ຕື່ມ, ການກວດກາຢາ ແລະ ອຸປະກອນການແພດ ເພື່ອລາຍງານໃຫ້ຫົວໜ້າແພດເປັນປົກກະຕິ.
2. ຂໍ້ຄົງຄ້າງ ຜ່ານມາ ການບັນທຶກແບບຟອມປະຈຳວັນ (QA+QC) ແລະ ວັດຖຸລະເບີດ, ຂອງຫົວໜ້າທີມງານພາກສະໜາມ ແມ່ນໄດ້ແກ້ໄຂແລ້ວ, ອີງຕາມບົດລາຍງານໃນຄັ້ງຜ່ານມາ ສະບັບເລກທີ 162 ລົງວັນທີ 22/02/2023.

ຜ່ານການຕິດຕາມ ແລະ ກວດກາການປະຕິບັດງານ ໂຄງການເກັບກູ້ລະເບີດ ແຫ່ງຊາດ ປະຈຳແຂວງ ອັດຕະປື (ຄກລ) ເຫັນວ່າດ້ານວິຊາການແມ່ນປະຕິບັດຖືກຕ້ອງຕາມທີ່ກຳນົດໃນມາດຕະຖານປະຕິບັດງານ (SOP) ຂອງໂຄງການ ແລະ ສອດຄ່ອງກັບມາດຕະຖານແຫ່ງຊາດທີ່ໄດ້ກຳນົດໄວ້.

ດັ່ງນັ້ນ, ຈິ່ງລາຍງານມາຍັງທ່ານເພື່ອຮັບຊາບ

| | |
|---|---|
| **ຫົວໜ້າຫ້ອງການ ຄຊກລ** | **ຫົວໜ້າໜ່ວຍງານຄຸ້ມຄອງຄຸນນະພາບ** |
| ໂຈນແຍງ ແພງທອງສະຫວັດ | ສົມສີກ. |

**ບ່ອນນຳສົ່ງ:**

- ຫ້ອງການ ຄກລ ວຽງຈັນ "ເພື່ອລາຍງານ"
- ຫ້ອງການ ຄຄກລຂ ອັດຕະປື "ເພື່ອລາຍງານ"
- ຫ້ອງການ ຄກລ ແຂວງອັດຕະປື "ເພື່ອຈັດຕັ້ງປະຕິບັດ"
- ຫ້ອງການ ຄຊກລ ເກັບມ້ຽນ

ບ້ານ ທົ່ງສ້າງນາງ,ເມືອງ ຈັນທະບຸລີ,ໄປສະນີ 7261,ນະຄອນຫຼວງວຽງຈັນ, ໂທ: (856 – 21) 262386,262416,ແຟັກ (856 -21) 262396,ທີ່ຢູ່ອີເມວລ໌. UXO,NRA @gmail.com; ເວັບໄຊ www.nra.gov.la.